ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 296/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 ມິຖຸນາ 2021

# ຂໍ້ຕົກລົງ
# ວ່າດ້ວຍຂອບເຂດການສະໜອງສິນເຊື່ອຂອງທະນາຄານທຸລະກິດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມຄຸ້ມຄອງທະນາຄານທຸລະກິດ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຂອບເຂດການສະໜອງສິນເຊື່ອຂອງທະນາຄານທຸລະກິດແກ່ຜູ້ກູ້ຢືມ ເພື່ອເປັນບ່ອນອີງໃຫ້ແກ່ທະນາຄານທຸລະກິດ ໃນການສະໜອງສິນເຊື່ອ ແລະ ບໍລິຫານຄວາມສ່ຽງ ແນໃສ່ຫຼຸດຜ່ອນຄວາມສ່ຽງຈຸດສຸມຂອງສິນເຊື່ອ ແລະ ປະກອບສ່ວນຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດ.

**ມາດຕາ 2 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ກູ້ຢືມ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ທະນາຄານທຸລະກິດໄດ້ອະນຸມັດການສະໜອງສິນເຊື່ອໃຫ້;

2. **ກຸ່ມຜູ້ກູ້ຢືມທີ່ກ່ຽວຂ້ອງກັນ** ໝາຍເຖິງ ກຸ່ມຜູ້ກູ້ຢືມທີ່ມີສາຍພົວພັນ ດ້ານອຳນາດຄວບຄຸມ ແລະ/ຫຼື ສິດທິຜົນດ້ານເສດຖະກິດ ຕໍ່ກັນ;

3. **ຜູ້ກູ້ຢືມລາຍໃຫຍ່** ໝາຍເຖິງ ຜູ້ກູ້ຢືມ ຫຼື ກຸ່ມຜູ້ກູ້ຢືມທີ່ກ່ຽວຂ້ອງກັນ ທີ່ທະນາຄານທຸລະກິດສະໜອງສິນເຊື່ອແຕ່ ສິບສ່ວນຮ້ອຍ ຂອງທຶນຊັ້ນໜຶ່ງ ຂຶ້ນໄປ.

ມາດຕາ 3 ຂອບເຂດການສະໜອງສິນເຊື່ອ

ທະນາຄານທຸລະກິດ ສາມາດສະໜອງສິນເຊື່ອ ຕາມຂອບເຂດ ດັ່ງນີ້:

1. ການສະໜອງສິນເຊື່ອໃຫ້ແກ່ຜູ້ກູ້ຢືມໃດໜຶ່ງ ຕ້ອງບໍ່ເກີນ ຊາວຫ້າສ່ວນຮ້ອຍ ຂອງທຶນຊັ້ນໜຶ່ງ;

2. ການສະໜອງສິນເຊື່ອໃຫ້ແກ່ກຸ່ມຜູ້ກູ້ຢືມທີ່ກ່ຽວຂ້ອງກັນ ລວມເຂົ້າກັນທັງໝົດ ຕ້ອງບໍ່ເກີນ ຫ້າສິບສ່ວນຮ້ອຍ ຂອງທຶນຊັ້ນໜຶ່ງ;

3. ການສະໜອງສິນເຊື່ອໃຫ້ແກ່ຜູ້ກູ້ຢືມລາຍໃຫຍ່ ລວມເຂົ້າກັນທັງໝົດ ຕ້ອງບໍ່ເກີນ ຫ້າຮ້ອຍສ່ວນຮ້ອຍ ຫຼື ຫ້າ ເທົ່າ ຂອງທຶນຊັ້ນໜຶ່ງ.

ທະນາຄານທຸລະກິດສາມາດສະໜອງສິນເຊື່ອຮ່ວມກັນ ລະຫວ່າງທະນາຄານທຸລະກິດ ແລະ/ຫຼື ສະຖາບັນການເງິນ ຕາມຂອບເຂດການສະໜອງສິນເຊື່ອ ທີ່ໄດ້ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້.

ຂອບເຂດການສະໜອງສິນເຊື່ອ ຂອງສາຂາທະນາຄານທຸລະກິດຕ່າງປະເທດ ແມ່ນໃຫ້ສາຂາທະນາຄານທຸລະກິດຕ່າງປະເທດເປັນຜູ້ກຳນົດ, ແຕ່ຕ້ອງໄດ້ຮັບການເຫັນດີຈາກສຳນັກງານໃຫຍ່ຂອງຕົນ.

**ມາດຕາ 4 ການຍົກເວັ້ນການຄິດໄລ່ຂອບເຂດການສະໜອງສິນເຊື່ອ**

ສິນເຊື່ອ ທີ່ຖືກຍົກເວັ້ນການຄິດໄລ່ຂອບເຂດການສະໜອງສິນເຊື່ອ ມີດັ່ງນີ້:

1. ການສະໜອງສິນເຊື່ອ ໃຫ້ແກ່ລັດຖະບານ ສປປ ລາວ;

2. ການສະໜອງສິນເຊື່ອ ດ້ວຍແຫຼ່ງທຶນຂອງລັດຖະບານ ສປປ ລາວ ຫຼື ທະນາຄານແຫ່ງ ສປປ ລາວ;

3. ການສະໜອງສິນເຊື່ອ ທີ່ໄດ້ຮັບການຄ້ຳປະກັນ ຈາກລັດຖະບານ ສປປ ລາວ ຫຼື ລັດຖະບານຂອງປະເທດໃນກຸ່ມອົງການເພື່ອການຮ່ວມມື ແລະ ພັດທະນາທາງດ້ານເສດຖະກິດ (Organisation for Economic Co-operation and Development-OECD) ຫຼື ສະຖາບັນການເງິນສາກົນໃນກຸ່ມບັນດາທະນາຄານເພື່ອການພັດທະນາລະຫວ່າງປະເທດ (Multilateral Development Bank-MDB);

4. ການສະໜອງສິນເຊື່ອ ສຳລັບປະເພດສິນເຊື່ອຊຳລະຄືນ ເມື່ອມີການຮຽກເກັບ (Call Facilities), ສິນເຊື່ອພາຍໃນມື້ (Overnight Facilities) ຂອງຕະຫຼາດການເງິນລະຫວ່າງທະນາຄານ ຫຼື ສິນເຊື່ອລະຫວ່າງທະນາຄານທຸລະກິດ ບໍ່ເກີນ ສິບສອງ ເດືອນ.

**ມາດຕາ 5 ການຄິດໄລ່ຂອບເຂດການສະໜອງສິນເຊື່ອ**

ຂອບເຂດການສະໜອງສິນເຊື່ອ ແມ່ນຜົນລວມຂອງເງິນກູ້ ແລະ ພາລະຜູກພັນທາງການເງິນ ທັງໝົດ ທີ່ທະນາຄານທຸລະກິດສະໜອງໃຫ້ຜູ້ກູ້ຢືມໜຶ່ງລາຍ ຊຶ່ງຄິດໄລ່ດ້ວຍວິທີການ ດັ່ງນີ້:

1. ສຳລັບເງິນກູ້: ໃຫ້ຖືເອົາວົງເງິນອະນຸມັດບ້ວງໃໝ່ ແລະ ຍອດເຫຼືອເງິນກູ້ຂອງວົງເງິນບ້ວງເກົ່າ ທັງໝົດ;

2. ສຳລັບພາລະຜູກພັນທາງການເງິນ: ໃຫ້ຖືເອົາວົງເງິນຕາມສັນຍາ ທີ່ທະນາຄານທຸລະກິດຍັງບໍ່ໄດ້ເບີກຈ່າຍ (Undisbursed Amount) ຫຼື ຍັງບໍ່ທັນໄດ້ປະຕິບັດພັນທະແທນຜູ້ກູ້ຢືມ ມາຄູນໃຫ້ກັບຕົວປ່ຽນສິນເຊື່ອ (Credit Conversion Factors-CCFs) ຕາມທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ໃນລະບຽບການວ່າດ້ວຍຄວາມພຽງພໍຂອງທຶນຂອງທະນາຄານທຸລະກິດ ໃນແຕ່ລະໄລຍະ.

ໃນນີ້, ທະນາຄານທຸລະກິດ ສາມາດຄິດໄລ່ການປັບຫຼຸດຂອບເຂດການສະໜອງສິນເຊື່ອ ໂດຍນຳເອົາເງິນແຮສະເພາະ ແລະ/ຫຼື ມູນຄ່າພື້ນຖານການຄ້ຳປະກັນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນລະບຽບ